# ຄໍານິຍາມ Social Inclusion

## 1. SI = ການມີສ່ວນຮ່ວມ ຂອງກຸ່ມຜູ້ດ້ອຍໂອກາດແມ່ນຫຍັງ (Social Inclusion)?

ຄໍາສັບນີ້ ມີຄວາມໝາຍກວ້າງກວ່າ ຄໍາວ່າ "ບົດບາດ ຍິງຊາຍ ແລະ ການພັດທະນາ."

ກົດໝາຍ ວ່າດ້ວຍ ສິດທິມະນຸດ ແລະ ວິທີການປະຕິບັດສິດທິມະນຸດ ລະບຸວ່າ : "ມະນຸດແຕ່ລະຄົນ ບໍ່ວ່າຈະມີອັດຕະລັກ ແນວໃດກໍຕາມ ມີສິດທິ ທີ່ຈະປົກປ້ອງ ແລະ ນໍາໃຊ້ສິດທິມະນຸດຂອງຕົນໄດ້ຢ່າງເຕັມປ່ຽມ".

ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ ແມ່ນ "ກຸ່ມພວກນີ້ໄດ້ເຂົ້າຮ່ວມ ຢ່າງມີບົດບາດໃນສັງຄົມ ແລະ ໃນທຸກແງ່ຂອງການພັດທະນາ ເພື່ອຍົກລະດັບຄວາມສາມາດ/ຄວາມຊໍານານ, ເພື່ອໄດ້ຮັບໂອກາດ, ໄດ້ຮັບສັກສີໃນຄວາມເປັນມະນຸດ ເຖິງຈະເປັນຜູ້ດ້ອຍໂອກາດ ຍ້ອນອັດຕະລັກໃນຕົວຕົນກໍຕາມ"

ເປັນທີ່ຮັບຮູ້ກັນວ່າ ກຸ່ມຜູ້ດ້ອຍໂອກາດ ອາດສາມາດ ຖືກຕັດອອກ ຈາກ ການເຂົ້າຮ່ວມໃນສັງຄົມ , ຈາກ ການເຮັດການຕັດສິນໃຈ ແລະ ຈາກ ການພັດທະນາ ດ້ວຍເຫດຜົນຫລາຍຢ່າງ ທີ່ອີງໃສ່ ອັດຕະລັກຂອງເຂົາເຈົ້າ, ເຊັ່ນ :

- ຍ້ອນ ສິດທິ ຍິງຊາຍ ຕ່າງກັນ
- ຍ້ອນ ເປັນຊົນເຜົ່າ ຫລື ເຊື້ອຊາດ ສີຜິວ ໃດໜຶ່ງ
- ຍ້ອນ ມີພາສາປາກເວົ້າ ຕ່າງກັບໝູ່
- ຍ້ອນສາສະໜາ
- ຍ້ອນ ຊົນຊັ້ນ ຫລື ຖານະເສດຖະກິດ, ລວມທັງ ຕໍາແໜ່ງໃນວຽກງານ, ແຮງງານເຄື່ອນຍ້າຍ
- ຍ້ອນມີພາວະທາງເພດຕ່າງກັນ
- ຍ້ອນ ອາຍຸ
- ຍ້ອນລະດັບ ການສຶກສາ
- ຍ້ອນຂາດຄວາມສາມາດດ້ານໃດໜຶ່ງໃນຮ່າງກາຍ (ພິການ)
- ຍ້ອນມາຈາກພູມສັນຖານຕ່າງກັນ (ເຊັ່ນ : ມາຈາກຊຸມຊົນທຸກຍາກ/ສະລໍາ, ມາຈາກປ່າຈາກດົງ)

ການຖືກຕັດອອກ ເປັນເລື້ອງເກີດຂຶ້ນເລື້ອຍໆທີ່ເໜັງຕີງປ່ຽນແປງໄປມາຢູ່ເລື້ອຍໆ : ເຊິ່ງເປັນການປະຕິບັດ ແລະ ການມີປະຕິກິລິຍາ ຕໍ່ກັນ ຂອງ ທັງສອງຝ່າຍ, ຝ່າຍຜູ້ຕັດແຍກຄົນອື່ນ

ອອກ (ບໍ່ໃຫ້ເຂົ້າຮ່ວມ, ແມ່ນຜູ້ມີສິດກວ່າ) ແລະ ຝ່າຍຜູ້ຖືກຕັດແຍກ (ບໍ່ໄດ້ຂົ້າຮ່ວມ, ມີສິດບໍ່ເທົ່າທຽມ).

ການຕັດແຍກກັນ ແມ່ນ ເນື່ອງມາຈາກ ຄວາມຄິດ ຄວາມເຂົ້າໃຈ ແລະ ຄວາມອັກຄະຕິ ຕໍ່ກັນ.

ການຕັດແຍກອອກ ອາດເຮັດໃຫ້ ຜູ້ຖືກຕັດແຍກ ກາຍເປັນຜູ້ຢູ່ເສີຍໆ, ບໍ່ສະແດງທ່າທີຫຍັງອອກ, ບໍ່ມີປະຕິກິລິຍາ, ບໍ່ຕໍ່ສູ້, ບໍ່ສົນໃຈ.

**ເປັນຫຍັງ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ ຈຶ່ງເປັນສິ່ງສຳຄັນ ?**

ເພາະມັນເປັນເງື່ອນຮັບປະກັນ :

- ຜົນສຳເລັດຂອງ ໃນການເຮັດວຽກ ການຫລຸດຜ່ອນຄວາມທຸກຍາກ
- ຄວາມຍືນຍົງຂອງການພັດທະນາ
- ການຕັດແຍກກັນ ເປັນສາເຫດ ຂອງການສູນເສຍເສດຖະກິດຂອງສັງຄົມທັງໝົດ
- ການຕັດແຍກກັນ ແມ່ນ ການລະເມີດສິດທິມະນຸດ ຂອງກັນ ແລະ ກັນ.